ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ກົມກວດກາປ່າໄມ້

ເລກທີ 1266 /ກກປມ.
ນະຄອນຫຼວງວຽງຈັນ, ວັນທີ 17 NOV 2009

# ແຈ້ງການ

ເຖິງ : ທ່ານຫົວໜ້າກອງກວດກາປ່າໄມ້ ປະຈຳແຂວງ, ນະຄອນຫລວງ.

ເລື່ອງ : ການຈັດຕັ້ງປະຕິບັດວຽກງານກວດກາສັດນ້ຳ, ສັດປ່າ ແລະ ພືດປ່າ.

– ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24/12/2007
– ອີງຕາມ ຄຳແນະນຳ ຂອງລັດຖະມົນຕີ ວ່າການ ກະຊວງ ກະສິກຳ ປ່າໄມ້ ສະບັບ ເລກທີ 0142/ກປ, ລົງວັນທີ 07/10/2009.

ເພື່ອປະຕິບັດ ວຽກງານກວດກາສັດນ້ຳ, ສັດປ່າ ແລະ ພືດປ່າ ໃຫ້ເຂົ້າສູ່ລະບຽບກົດໝາຍ ມີຄວາມສະຫງົບ, ຖືກຕ້ອງ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ໃນການຄວບຄຸມການຄ້າຂາຍ, ການເຄື່ອນຍ້າຍພາຍໃນ ແລະ ສົ່ງອອກ ໃຫ້ມີຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ

ເພື່ອເປັນການຫລີກລ້ຽງຫາງສຽງ ພາຍໃນ ແລະ ຕ່າງປະເທດ ທີ່ຈະສົ່ງຜົນກະທົບທາງລົບຕໍ່ການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່ປ່າໄມ້ ຊຶ່ງມີຄວາມຮັບຜິດຊອບໃນການກວດກາ ແລະ ການປົກປ້ອງກົດໝາຍ ໃຫ້ມີຜົນສັກສິດ, ມີຄວາມທັດກຸມ, ທ່ຽງທຳ ແລະ ເພື່ອສ້າງບົດບາດຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ປ່າໄມ້ ໃນການປະຕິບັດໜ້າທີ່ກວດກາ ສັດນ້ຳ, ສັດປ່າ ແລະ ພືດປ່າ ນັ້ນ,

ຜ່ານມາການກວດກາ ສັດນ້ຳ ແລະ ສັດປ່າ ແມ່ນເຫັນວ່າ ຍັງບໍ່ທັນປະຕິບັດ ໄປຕາມລະບຽບ ແລະ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ ຢ່າງຄົບຖ້ວນເທື່ອ.

ກົມກວດກາປ່າໄມ້ ຈຶ່ງແຈ້ງມາຍັງທ່ານປະຕິບັດ ການກວດກາ ການຄ້າຂາຍ ສັດນ້ຳ ແລະ ສັດປ່າ ທີ່ໄດ້ລ້ຽງຕາມມາດຕາ 40 ຂອງກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຕ້ອງປະຕິບັດດັ່ງນີ້:

1. ສັດນ້ຳ ແລະ ສັດປ່າ ປະເພດຫວງຫ້າມ ສາມາດຄ້າຂາຍເລີ່ມແຕ່ ສາຍພັນ ລຸ້ນ 2 ແລະ ລຸ້ນຕໍ່ໄປ, ສ່ວນພໍ່ພັນ ແມ່ພັນ ແລະ ສາຍພັນລຸ້ນ 1 ແມ່ນ ບໍ່ອະນຸຍາດໃຫ້ຄ້າຂາຍ, ໃຫ້ ຮັກສາໄວ້ ເພື່ອເປັນພໍ່ພັນແມ່ພັນ ຫລື ປ່ອຍຄືນສູ່ທຳມະຊາດ;
2. ສັດນ້ຳ ແລະ ສັດປ່າ ປະເພດຄຸ້ມຄອງ ແລະ ສັດປ່າ ປະເພດທົ່ວໄປ ສາມາດຄ້າຂາຍ ເລີ່ມແຕ່ສາຍພັນລຸ້ນ 1 ແລະ ລຸ້ນຕໍ່ໄປ, ສ່ວນພໍ່ພັນ ແມ່ພັນ ແມ່ນບໍ່ອະນຸຍາດ ໃຫ້ຄ້າ ຂາຍ, ໃຫ້ຮັກສາໄວ້ເພື່ອເປັນພໍ່ພັນ ແມ່ພັນ ຫລື ປ່ອຍຄືນສູ່ທຳມະຊາດ;
3. ສັດນ້ຳ ປະເພດທົ່ວໄປ ສາມາດຄ້າຂາຍໄດ້ ຕາມລະບຽບກົດໝາຍ.

ສຳລັບການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ນຳຜ່ານ ສັດນ້ຳ, ສັດປ່າ ແລະ ສິ້ນສ່ວນຕ່າງໆຂອງສັດ ຕ້ອງປະຕິບັດຕາມມາດຕາ 40 ແລະ ມາດຕາ 42 ຂອງກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ທີ່ໄດ້ກຳນົດໄວ້ ດັ່ງນີ້:

1. ການນຳເຂົ້າ ສັດນ້ຳ ແລະ ສັດປ່າ ຕ້ອງມີໃບອະນຸຍາດສົ່ງອອກ ຈາກອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ, ໃບຢັ້ງຢືນຖິ່ນກຳເນີດ, ໃບຢັ້ງຢືນປອດພະຍາດ, ສັນຍາລະຫວ່າງຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ, ລາຍການບັນຊີປະເພດສັດ ແລະ ຈຳນວນສັດທີ່ຈະນຳເຂົ້າ, ໃບອະ ນຸຍາດນຳເຂົ້າ ຂອງຂະແໜງການກະສິກຳ ແລະ ປ່າໄມ້;
2. ການສົ່ງອອກ ສັດນ້ຳ ແລະ ສັດປ່າ ຕ້ອງມີ ໃບຢັ້ງຢືນ ກ່ຽວກັບການຂະຫຍາຍພັນ ຫລື ລ້ຽງ, ໃບຢັ້ງຢືນຖິ່ນກຳເນີດ, ໃບຢັ້ງຢືນປອດພະຍາດ, ສັນຍາລະຫວ່າງຜູ້ນຳເຂົ້າ ແລະ ຜູ້ ສົ່ງອອກ, ລາຍການບັນຊີປະເພດ ແລະ ຈຳນວນສັດ ທີ່ຈະສົ່ງອອກ, ໃບອະນຸຍາດສົ່ງອອກ ຂອງກະຊວງກະສິກຳ ແລະ ປ່າໄມ້, ໃບອະນຸຍາດນຳເຂົ້າ ຂອງອົງການທີ່ກ່ຽວຂ້ອງ ຂອງປະເທດ ປາຍທາງ;
3. ການສົ່ງອອກຄືນ ສັດນ້ຳ ແລະ ສັດປ່າ ນອກຈາກເອກະສານທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຍັງຕ້ອງມີ ໃບແຈ້ງຂຶ້ນທະບຽນສັດ, ໃບຢັ້ງຢືນ ກ່ຽວກັບການຂະຫຍາຍພັນ ຫລື ລ້ຽງ, ໃບຢັ້ງຢືນປອດພະຍາດ, ລາຍການບັນຊີປະເພດ ແລະ ຈຳນວນສັດທີ່ຈະສົ່ງອອກ, ໃບອະນຸຍາດສົ່ງອອກຄືນ ຂອງກະຊວງກະສິກຳ ແລະ ປ່າໄມ້, ໃບອະນຸຍາດນຳເຂົ້າຄືນ ຂອງ ອົງການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ;
4. ການນຳຜ່ານ ສັດນ້ຳ ແລະ ສັດປ່າ ຕ້ອງໄດ້ແຈ້ງເອກະສານ ເຊັ່ນ: ໃບອະນຸຍາດສົ່ງອອກ ແລະ ນຳເຂົ້າຂອງ ອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ ແລະ ປາຍທາງ, ໃບຢັ້ງຢືນຖິ່ນກຳເນີດ, ໃບຢັ້ງຢືນປອດພະຍາດ, ລາຍການບັນຊີ ປະເພດ ແລະ ຈຳນວນສັດທີ່ຈະສົ່ງຜ່ານ. ການນຳຜ່ານ ສັດນ້ຳ ແລະ ສັດປ່າ ຕ້ອງໄດ້ຮັບການກວດກາ;

ນອກຈາກນີ້ແລ້ວ, ຕ້ອງປະຕິບັດຕາມ ຄຳແນະນຳ ຂອງລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0142/ກປ, ລົງວັນທີ 07/10/2009 ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າ ກົມກວດກາປ່າໄມ້

ບ່ອນສົ່ງ:
- ຫົວໜ້າຫ້ອງການ ກະຊວງ ກະສິກຳ ແລະ ປ່າໄມ້ — ເພື່ອຊາບ
- ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ — ເພື່ອຊຸກຍູ້ການຈັດຕັ້ງປະຕິບັດ
- ຫົວໜ້າກອງກວດກາປ່າໄມ້ ປະຈຳແຂວງ, ນະຄອນຫລວງ — ເພື່ອປະຕິບັດ
- ຫົວໜ້າພະແນກການອ້ອມຂ້າງກົມກວດກາປ່າໄມ້ — ບ່ອນລະ 1 ສະບັບ
- ເກັບມ້ຽນ — 1 ສະບັບ

ກະຊວງກະສິກຳ ແລະ ປ່າໄມ້ ກົມກວດກາປ່າໄມ້

ສູນີ ພູມະນີວົງ